ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 348 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 28 ມັງກອນ 2021

# ຂໍ້ຕົກລົງ

## ວ່າດ້ວຍການອະນຸມັດທົດລອງນຳໃຊ້ຊຸດການສອນ ພາກທິດສະດີ ແລະ ພາກປະຕິບັດ ໃນສາຍອາຊີວະສຶກສາ

- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 253/ນຍ, ລົງວັນທີ 26 ພຶດສະພາ 2020;
- ອີງຕາມ ການຄົ້ນຄ້ວາ ແລະ ນຳສະເໜີຂອງກົມອາຊີວະສຶກສາ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

ມາດຕາ 01 ອະນຸມັດທົດລອງນຳໃຊ້ຊຸດການສອນ ພາກທິດສະດີ ແລະ ພາກປະຕິບັດ ໃນສາຍອາຊີວະສຶກສາຢູ່ ສປປ ລາວ ເປັນທາງການ.

ມາດຕາ 02 ໃຫ້ຫ້ອງການກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ, ກົມອາຊີວະສຶກສາ, ສະຖາບັນພັດທະນາອາຊີວະສຶກສາ, ສະຖານອາຊີວະສຶກສາແຕ່ງຕ່າງໆ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມໜ້າທີ່ຂອງໃຜລາວ.

ມາດຕາ 03 ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຊັນແທນ ລັດຖະມົນຕີ

ກະຊວງສຶກສາທິການ ແລະ ກິລາ

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

**ບ່ອນສົ່ງ:**

- ຫ້ອງການກະຊວງສຶກສາທິການ ແລະ ກິລາ 01 ສະບັບ
- ກົມຈັດຕັ້ງພະນັກງານ 01 ສະບັບ
- ກົມອາຊີວະສຶກສາ 01 ສະບັບ
- ສພອ 02 ສະບັບ
- ພາກສ່ວນທີ່ກ່ຽວຂ້ອງ 01 ສະບັບ
- ເກັບມ້ຽນ 01 ສະບັບ